ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 098 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 30 ສິງຫາ 2023

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍສັດປ່າ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 92/ສພຊ, ລົງວັນທີ 17 ກໍລະກົດ 2023 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັດປ່າ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 26/ຄປຈ, ລົງວັນທີ 15 ສິງຫາ 2023.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍວ່າດ້ວຍສັດປ່າ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 92 / ສພຊ
ນະຄອນຫຼວງວຽງຈັນ, ວັນທີ 17 / 07 / 23

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍສັດປ່າ
# (ສະບັບປັບປຸງ)

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍສັດປ່າ (ສະບັບປັບປຸງ) ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 13 ກໍລະກົດ 2023 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນບ່າຍຂອງວັນທີ 17 ກໍລະກົດ 2023.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍສັດປ່າ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 42 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 17 ກໍລະກົດ 2023

# ກົດໝາຍ
# ວ່າດ້ວຍສັດປ່າ (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການ ຄຸ້ມຄອງ ແລະ ຕິດຕາມ ກວດກາ ວຽກງານສັດປ່າ ເພື່ອເຮັດໃຫ້ວຽກງານດັ່ງກ່າວມີ ປະສິດທິພາບ, ປະສິດທິຜົນ ແນໃສ່ບໍ່ໃຫ້ມີຜົນກະທົບຕໍ່ ທຳມະຊາດ, ຖິ່ນທີ່ຢູ່ອາໄສ, ຈຳກັດການຫຼຸດລົງ ແລະ ການສູນພັນ ຂອງສັດປ່າ ພ້ອມທັງປຸກລະດົມ ທົ່ວປວງຊົນ ໃຫ້ເຫັນໄດ້ຄວາມສຳຄັນ, ເຊີດຊູສະຕິຮັກ, ຫວງແຫນ, ຖະໜອມ ແລະ ເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ສັດປ່າ ແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມຕາມທິດສີຂຽວ ແລະ ຍືນຍົງ ຮັບປະກັນສິດ ແລະ ຜົນປະໂຫຍດຂອງຊາດ ແລະ ປະຊາຊົນ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 (ປັບປຸງ) ສັດປ່າ**

ສັດປ່າ ແມ່ນ ສັດທຸກຊະນິດ ທີ່ເກີດ, ດຳລົງຊີວິດ ແລະ ຂະຫຍາຍຕົວ ຢູ່ໃນປ່າ, ຖິ່ນທີ່ຢູ່ອາໄສຂອງສັດປ່າ ຫຼື ຖືກນຳເອົາ ມາລ້ຽງ ແລະ ຂະຫຍາຍພັນ ຊຶ່ງປະກອບດ້ວຍ ສັດລ້ຽງລູກດ້ວຍນ້ຳນົມ, ສັດເລືອຄານ, ສັດປີກ ແລະ ສັດປ່າ ຊະນິດອື່ນ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄຊເຕັດ** (CITES: Convention on International Trade in Endangered Species of Wild Fauna and Flora) ໝາຍເຖິງ ສົນທິສັນຍາວ່າດ້ວຍການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ຊຶ່ງຖືກຮັບຮອງ ຢູ່ ວໍຊິງຕັນ ດີຊີ ໃນວັນທີ 3 ມີນາ 1973 ແລະ ສປປ ລາວ ເຂົ້າເປັນພາຄີ ໃນວັນທີ 1 ມີນາ 2004;

2. **ສັດລ້ຽງລູກດ້ວຍນ້ຳນົມ** ໝາຍເຖິງ ສັດປ່າ ທີ່ມີນົມ, ອອກລູກເປັນໂຕ ເຊັ່ນ ຊ້າງ, ເສືອ, ລີງ, ເຈຍ, ຂະຍຸ ແລະ ສັດອື່ນທີ່ລ້ຽງລູກດ້ວຍນ້ຳນົມ;

3. **ສັດເລືອຄານ** ໝາຍເຖິງ ສັດປ່າ ທີ່ມີກະດູກສັນຫຼັງ, ມີເກັດ ຫຼື ອອງ ແລະ ອອກໄຂ່ ຊຶ່ງເຄື່ອນໄຫວໄປມາ ດ້ວຍການເລືອ ຫຼື ຄານ ເຊັ່ນ ແຂ້, ງູ, ເຕົ່າ, ແລນ, ເຫັ້ຍ ແລະ ສັດເລືອຄານອື່ນ;

4. **ສັດປີກ** ໝາຍເຖິງ ສັດປ່າ ທີ່ມີປີກ, ຂົນ ແລະ ອອກໄຂ່ ເຊັ່ນ ນົກຍູງ, ແຮ້ງ, ກາ, ນົກກົດ, ໄກ່ປ່າ, ໄກ່ຂວາ ແລະ ສັດປີກອື່ນ;

5. **ສາຍພັນ ຮຸ່ນ 1** ໝາຍເຖິງ ລູກ ທີ່ເກີດມາຈາກພໍ່ພັນ ແມ່ພັນ ສັດປ່າທຳມະຊາດ ຊຶ່ງພໍ່ພັນ ແມ່ພັນນັ້ນ ໄດ້ຖືກນຳມາລ້ຽງ;

6. **ສາຍພັນ ຮຸ່ນ 2** ໝາຍເຖິງ ລູກ ຂອງສັດປ່າ ຂອງສາຍພັນ ຮຸ່ນ 1;

7. **ຊິ້ນສ່ວນສັດປ່າ** ໝາຍເຖິງ ພາກສ່ວນໃດໜຶ່ງ ຂອງສັດປ່າ ເຊັ່ນ ຫົວ, ຂາ, ຕີນ, ໜັງ, ຊີ້ນ, ເລືອດ, ເຂົາ, ນໍ, ງາ, ແຂ້ວ, ກະດູກ, ບີ, ນ້ຳມັນ, ໄຂ, ເກັດ, ອອງ, ຂົນ, ເລັບ, ຫາງ ແລະ ອະໄວຍະວະອື່ນ;

8. **ຜະລິດຕະພັນສັດປ່າ** ໝາຍເຖິງ ຊິ້ນສ່ວນ ຂອງສັດປ່າ ທີ່ຖືກນຳມາປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເຊັ່ນ ຢາປົວພະຍາດ, ເຄື່ອງປະດັບ ແລະ ເຄື່ອງໃຊ້ອື່ນ;

9. **ການຂຶ້ນທະບຽນ** ໝາຍເຖິງ ການເກັບກຳປະຫວັດ ແລະ ຂໍ້ມູນອື່ນຂອງ ສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ຢູ່ໃນການຄອບຄອງ ເຊັ່ນ ຊື່, ອາຍຸ, ເພດ, ສີ, ນ້ຳໜັກ, ຖິ່ນກຳເນີດ, ປະເພດ, ສາຍພັນ, ແຫຼ່ງທີ່ມາ ແລະ ຕຳນິຮູບປະພັນຈຸດພິເສດອື່ນ ເພື່ອອອກໃບທະບຽນສັດ ແລະ ຢັ້ງຢືນກຳມະສິດຂອງເຈົ້າຂອງສັດ;

10. **ການແຈ້ງບັນຊີ** ໝາຍເຖິງ ການແຈ້ງ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບຈຳນວນການເພີ່ມຂຶ້ນ ຫຼື ຫຼຸດລົງຂອງສັດປ່າ, ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ມີຢູ່ໃນການຄອບຄອງຂອງຕົນ;

11. **ຖິ່ນທີ່ຢູ່ອາໄສຂອງສັດປ່າ** ໝາຍເຖິງ ບ່ອນດຳລົງຊີວິດ, ຂະຫຍາຍພັນ ຕາມທຳມະຊາດ ເຊັ່ນ ປ່າໄມ້, ທົ່ງຫຍ້າ, ຖ້ຳ, ປຸ່ງ, ແມ່ນ້ຳ ລຳເຊ, ຫ້ວຍ, ບຶງ, ໜອງ ຫຼື ທີ່ດິນບໍລິເວນນ້ຳ;

12. **ເຂດອະນຸລັກພັນສັດປ່າ** ໝາຍເຖິງ ພື້ນທີ່ປ່າໄມ້, ທີ່ດິນປ່າໄມ້ ແລະ ແຫຼ່ງນ້ຳ ຊຶ່ງໄດ້ກຳນົດໃຫ້ເປັນຖິ່ນທີ່ຢູ່ອາໄສ ຂອງສັດປ່າຊະນິດຕ່າງໆ ຕາມລະບຽບການ;

13. **ການທໍລະມານສັດ** ໝາຍເຖິງ ການນຳໃຊ້ແຮງງານສັດເກີນຂອບເຂດ, ຂາດຄວາມຮັບຜິດຊອບຕໍ່ການລ້ຽງດູ ແລະ ຮັກສາສຸຂະພາບຂອງສັດ, ໃຫ້ອາຫານບໍ່ພຽງພໍ, ທຳຮ້າຍສັດ, ບັນທຸກ, ຂົນສົ່ງ ສັດແບບແອອັດ ແລະ ອື່ນໆ;

14. **ລຳດັບມາດຕະການຫຼຸດຜ່ອນຜົນກະທົບ** (Mitigation Hierarchy) ໝາຍເຖິງ ວິທີການຫຼຸດຜ່ອນຜົນກະທົບຈາກໂຄງການລົງທຶນ ຕໍ່ຊີວະນານາພັນ ແລະ ການບໍລິການລະບົບນິເວດ ທີ່ໄດ້ຮັບການຍອມຮັບຈາກສາກົນ ຊຶ່ງຕ້ອງນຳໃຊ້ມາດຕະການ ຫຼີກລ່ຽງ, ຫຼຸດຜ່ອນ, ຟື້ນຟູ ແລະ ການທົດແທນຊີວະນານາພັນແບບຄົບຖ້ວນ (Offset) ຕາມລຳດັບ ແນໃສ່ການທົດແທນຊີວະນານາພັນເທົ່າເດີມ (No Net Loss) ຫຼື ການເພີ່ມຊີວະນານາພັນ (Net Gain);

15. **ການທົດແທນຊີວະນານາພັນແບບຄົບຖ້ວນ** ໝາຍເຖິງ ການດຳເນີນການ ເພື່ອທົດແທນຜົນກະທົບທາງລົບຕໍ່ຊີວະນານາພັນ ທີ່ຍັງເຫຼືອຄ້າງ ແລະ ສືບຕໍ່ມີຈາກໂຄງການລົງທຶນ ຫຼັງຈາກທີ່ໄດ້ດຳເນີນມາດຕະການ ຫຼີກລ່ຽງ, ຫຼຸດຜ່ອນ ແລະ ຟື້ນຟູ ຢ່າງເໝາະສົມ;

16. **ເຄື່ອງມືທີ່ບໍ່ມີລັກສະນະດັບສູນ** ໝາຍເຖິງ ອາວຸດພື້ນເມືອງ ແລະ ເຄື່ອງມືລ່າສັດປ່າແບບພື້ນເມືອງ ຊຶ່ງບໍ່ເປັນໄພຂົ່ມຂູ່ ແລະ ບໍ່ມີຄວາມສ່ຽງຕໍ່ການສູນພັນຂອງສັດປ່າ;

17. **ຈຸດປະສົງທາງການຄ້າ** ໝາຍເຖິງ ການດຳເນີນກິດຈະກຳທີ່ກ່ຽວຂ້ອງກັບ ການຄ້າຂາຍສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ດ້ວຍເງິນສົດ ຫຼື ຮູບແບບອື່ນ ເພື່ອຜົນປະໂຫຍດທາງເສດຖະກິດ;

18. **ສວນສັດປ່າ** ໝາຍເຖິງ ສະຖານທີ່ ທີ່ລັດອະນຸຍາດ ໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສ້າງຂຶ້ນ ເພື່ອດຳເນີນກິດຈະການລ້ຽງ, ຂະຫຍາຍພັນ ແລະ ອະນຸລັກ ສັດປ່າ ແນໃສ່ບໍລິການ ທາງດ້ານການທ່ອງທ່ຽວ, ສະແດງລະຄອນສັດປ່າ ແລະ ແລກປ່ຽນວັດທະນະທຳ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານສັດປ່າ**

ລັດ ຊຸກຍູ້ສົ່ງເສີມວຽກງານສັດປ່າ ດ້ວຍການວາງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ, ລະບຽບການ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ອັດຖຸປະກອນ, ເຕັກນິກວິຊາການ ແລະ ເຕັກໂນໂລຊີທີ່ທັນສະໄໝ ເຂົ້າໃນວຽກງານດັ່ງກ່າວ.

ລັດ ຊຸກຍູ້ໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາສັດປ່າ ຢູ່ໃນທຳມະຊາດ ເພື່ອເປັນທ່າແຮງ ດ້ານການທ່ອງທ່ຽວ ແລະ ບ່ອນສຶກສາຄົ້ນຄວ້າທົດລອງ ດ້ວຍການໄດ້ຮັບນະໂຍບາຍສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ, ອາກອນ ຕາມກົດໝາຍ.

**ມາດຕາ 5 (ປັບປຸງ) ຫຼັກການກ່ຽວກັບວຽກງານສັດປ່າ**

ວຽກງານສັດປ່າ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຖືເອົາການປົກປັກຮັກສາສັດປ່າ ເປັນວຽກງານຕົ້ນຕໍ, ເອົາການຄຸ້ມຄອງ ແລະ ພັດທະນາສັດປ່າແບບຍືນຍົງ ເປັນວຽກງານສຳຄັນ;
4. ຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ແລະ ການປະສານສົມທົບລະຫວ່າງກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ;
5. ມີຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;
6. ຮັບປະກັນຄວາມປອດໄພທາງດ້ານຊີວະພາບ ແລະ ຜົນປະໂຫຍດຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕາມກົດໝາຍ;
7. ນຳໃຊ້ສັດປ່າ ໃຫ້ມີປະສິດທິຜົນ, ປະຢັດ, ບໍ່ກະທົບຕໍ່ສິ່ງແວດລ້ອມ.

**ມາດຕາ 6 (ປັບປຸງ) ກຳມະສິດກ່ຽວກັບສັດປ່າ**

ສັດປ່າທຳມະຊາດທຸກຊະນິດ ໃນດິນແດນຂອງ ສປປ ລາວ ເປັນກຳມະສິດຂອງວົງຄະນະຍາດແຫ່ງຊາດ ຊຶ່ງລັດເປັນຜູ້ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ. ລັດ ຮັບຮູ້ສິດນຳໃຊ້ສັດປ່າຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມກົດໝາຍ.

ສັດປ່າທີ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລ້ຽງ ແລະ ຂະຫຍາຍພັນ ດ້ວຍເຫື່ອແຮງ ຫຼື ທຶນ ຂອງຕົນ ໂດຍໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງວຽກງານສັດປ່າ ເປັນກຳມະສິດຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງນັ້ນ.

**ມາດຕາ 7 (ປັບປຸງ) ພັນທະຂອງພົນລະເມືອງ**

ພົນລະເມືອງທຸກຄົນ ມີພັນທະໃນການເຂົ້າຮ່ວມ, ປະກອບສ່ວນ ແລະ ໃຫ້ການຮ່ວມມື ໃນວຽກງານສັດປ່າ ຕາມກົດໝາຍ ເປັນຕົ້ນ ການປົກປັກຮັກສາ, ການແຈ້ງ ຫຼື ລາຍງານກ່ຽວກັບ ການເກີດພະຍາດສັດປ່າ, ການກະທຳທີ່ເປັນການລະເມີດກົດໝາຍ, ການສະກັດກັ້ນຜົນກະທົບທາງລົບ ທີ່ຈະເກີດຂຶ້ນຕໍ່ສັດປ່າ.

**ມາດຕາ 8 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບວຽກງານສັດປ່າ ຢູ່ ສປປ ລາວ.

**ມາດຕາ 9 (ປັບປຸງ) ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັດປ່າ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ພັດທະນາບຸກຄະລາກອນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຂະຫຍາຍຕົວ, ເຂັ້ມແຂງ, ທັນສະໄໝ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ພາກທີ II
## ປະເພດສັດປ່າ

**ມາດຕາ 10 (ປັບປຸງ) ປະເພດສັດປ່າ**

ສັດປ່າ ຢູ່ ສປປ ລາວ ແບ່ງເປັນ ສາມ ປະເພດ ດັ່ງນີ້:

1. ສັດປ່າ ປະເພດຫວງຫ້າມ ແມ່ນ ສັດປ່າບັນຊີ I;
2. ສັດປ່າ ປະເພດຄຸ້ມຄອງ ແມ່ນ ສັດປ່າບັນຊີ II;
3. ສັດປ່າ ປະເພດທົ່ວໄປ ແມ່ນ ສັດປ່າບັນຊີ III.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຮອງບັນຊີສັດປ່າ ໃນແຕ່ລະໄລຍະ.

**ມາດຕາ 11 (ປັບປຸງ) ສັດປ່າບັນຊີ I**

ສັດປ່າບັນຊີ I ແມ່ນ ສັດປ່າທີ່ ຫາຍາກ, ຖືກໄພຂົ່ມຂູ່ ແລະ ມີຄວາມສ່ຽງຕໍ່ການສູນພັນ, ມີຄວາມສຳຄັນຕໍ່ ລະບົບນິເວດ, ການທ່ອງທ່ຽວແບບອະນຸລັກ ແລະ ການສຶກສາຄົ້ນຄວ້າດ້ານວິທະຍາສາດ.

ສັດປ່າບັນຊີ I ຕ້ອງໄດ້ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ.

**ມາດຕາ 12 (ປັບປຸງ) ສັດປ່າບັນຊີ II**

ສັດປ່າບັນຊີ II ແມ່ນ ສັດປ່າທີ່ ຍັງບໍ່ຖືກໄພຂົ່ມຂູ່ຕໍ່ການສູນພັນ, ມີຄຸນປະໂຫຍດທາງດ້ານລະບົບນິເວດ, ເສດຖະກິດ-ສັງຄົມ ແລະ ການສຶກສາຄົ້ນຄວ້າດ້ານວິທະຍາສາດ.

ສັດປ່າບັນຊີ II ຕ້ອງມີການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ຄວບຄຸມການນຳໃຊ້.

**ມາດຕາ 13 (ປັບປຸງ) ສັດປ່າບັນຊີ III**

ສັດປ່າບັນຊີ III ແມ່ນ ສັດປ່າ ທີ່ສາມາດຂະຫຍາຍພັນໄດ້ຕາມທຳມະຊາດຢ່າງກວ້າງຂວາງ ຊຶ່ງມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ລະບົບນິເວດ, ຊີວິດການເປັນຢູ່ຂອງປະຊາຊົນ ແລະ ການສຶກສາຄົ້ນຄວ້າດ້ານວິທະຍາສາດ.

ສັດປ່າບັນຊີ III ສາມາດຊົມໃຊ້ໄດ້ ຕາມກົດໝາຍ ແລະ ຮັບປະກັນໃຫ້ມີການນຳໃຊ້ແບບຍືນຍົງ.

## ພາກທີ III
## ກິດຈະການກ່ຽວກັບສັດປ່າ
## ໝວດທີ 1
## ການຄຸ້ມຄອງສັດປ່າ

**ມາດຕາ 14 (ປັບປຸງ) ການຄຸ້ມຄອງສັດປ່າ**

ການຄຸ້ມຄອງສັດປ່າ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການຂຶ້ນທະບຽນ ແລະ ແຈ້ງບັນຊີສັດປ່າ;
2. ການລ່າສັດປ່າ;
3. ການຄຸ້ມຄອງເຄື່ອງມືລ່າສັດປ່າ;
4. ການຄ້າຂາຍສັດປ່າ;
5. ການເຄື່ອນຍ້າຍສັດປ່າ;
6. ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດປ່າ;
7. ການສ້າງສວນສັດປ່າ;
8. ການສ້າງຟາມສັດປ່າ;
9. ການສະແດງລະຄອນສັດປ່າ;
10. ການສ້າງສາລະຄະດີສັດປ່າ;
11. ການທ່ອງທ່ຽວແບບອະນຸລັກສັດປ່າ;
12. ພິພິທະພັນສັດປ່າ;
13. ການເກັບຮັກສາ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ;
14. ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ;
15. ການແກ້ໄຂຂໍ້ຂັດແຍ່ງລະຫວ່າງຄົນ ແລະ ສັດປ່າ;
16. ການຫຼຸດຜ່ອນຜົນກະທົບຕໍ່ສັດປ່າຈາກການພັດທະນາໂຄງການ;
17. ກິດຈະການອື່ນ.

**ມາດຕາ 15 (ປັບປຸງ) ການຂຶ້ນທະບຽນ ແລະ ແຈ້ງບັນຊີສັດປ່າ**

ສັດປ່າບັນຊີ I ທີ່ນຳມາລ້ຽງ ຢູ່ໃນ ສວນສັດປ່າ, ຟາມສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສະຖານທີ່ອື່ນ ທີ່ໄດ້ຮັບອະນຸຍາດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ຕ້ອງໄດ້ຂຶ້ນທະບຽນ ແລະ ແຈ້ງບັນຊີ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ສັດປ່າບັນຊີ II ທີ່ນຳມາລ້ຽງ ຢູ່ໃນ ສວນສັດປ່າ, ຟາມສັດປ່າ, ສູນຟື້ນຟູ ແລະ ຂະຫຍາຍພັນ ສັດປ່າ ແລະ ສະຖານທີ່ອື່ນ ທີ່ໄດ້ຮັບອະນຸຍາດ ເພື່ອຈຸດປະສົງທາງການຄ້າ ຕ້ອງໄດ້ຂຶ້ນທະບຽນ ແລະ ແຈ້ງບັນຊີ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງແຈ້ງບັນຊີ ຈຳນວນ, ຊະນິດພັນ, ການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງສັດປ່າ ທີ່ມີຢູ່ໃນການຄອບຄອງຂອງຕົນ ນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ໃນແຕ່ລະປີ.

ສຳລັບສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ຂຶ້ນທະບຽນ ແລະ ແຈ້ງບັນຊີ ນຳໜ່ວຍງານຄຸ້ມຄອງໄຊເຕັດ ຕາມລະບຽບການທີ່ກ່ຽວຂ້ອງ.

ສັດປ່າບັນຊີ III ທີ່ນຳມາລ້ຽງ ຫຼື ຂະຫຍາຍພັນ ບໍ່ຈຳເປັນຕ້ອງຂຶ້ນທະບຽນ ແລະ ແຈ້ງບັນຊີສັດປ່າ.

ສຳລັບຂັ້ນຕອນ, ເງື່ອນໄຂ ຂອງການຂຶ້ນທະບຽນ ແລະ ແຈ້ງບັນຊີສັດປ່າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 16 (ປັບປຸງ) ການລ່າສັດປ່າ**

ການລ່າສັດປ່າ ແມ່ນ ການເອົາສັດປ່າ ດ້ວຍການ ຈັບ, ຍິງ, ໂຫ່, ດັກ, ໄລ່ຕ້ອນ ຫຼື ວິທີການອື່ນ.

ການລ່າສັດປ່າ ຕ້ອງປະຕິບັດ ດັ່ງນີ້:

1. ສັດປ່າບັນຊີ I ບໍ່ອະນຸຍາດໃຫ້ລ່າຢ່າງເດັດຂາດ ເວັ້ນເສຍແຕ່ກໍລະນີຈຳເປັນ ເພື່ອການສຶກສາ ຄົ້ນຄວ້າ ແລະ ການຂະຫຍາຍພັນທີ່ບໍ່ແມ່ນຈຸດປະສົງທາງການຄ້າ ແຕ່ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້;

2. ສັດປ່າບັນຊີ II ອະນຸຍາດໃຫ້ລ່າສັດ ບາງຊະນິດ, ບາງເຂດ ແລະ ບາງລະດູການ ເພື່ອນຳໃຊ້ເຂົ້າໃນສາທາລະນະປະໂຫຍດ, ຄອບຄົວ ແລະ ຕາມປະເພນີ ໂດຍນຳໃຊ້ເຄື່ອງມືທີ່ບໍ່ມີລັກສະນະດັບສູນ ຕາມການກຳນົດຂອງອົງການຄຸ້ມຄອງວຽກງານສັດປ່າ;

3. ສັດປ່າບັນຊີ III ອະນຸຍາດໃຫ້ລ່າໄດ້ ຕາມລະດູການທີ່ໄດ້ກຳນົດ ໂດຍນຳໃຊ້ເຄື່ອງມືທີ່ບໍ່ມີລັກສະນະດັບສູນ.

**ມາດຕາ 17 (ປັບປຸງ) ການຄຸ້ມຄອງເຄື່ອງມືລ່າສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງ ຜະລິດ, ນຳເຂົ້າ-ສົ່ງອອກ, ຄອບຄອງ ແລະ ນຳໃຊ້ເຄື່ອງມືລ່າສັດປ່າ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ປະຕິບັດຕາມລະບຽບການ ຂອງຂະແໜງການທີ່ກ່ຽວຂ້ອງ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການ ກ່ຽວກັບການຄຸ້ມຄອງເຄື່ອງມືລ່າສັດປ່າ.

**ມາດຕາ 18 (ປັບປຸງ) ການຄ້າຂາຍສັດປ່າ**

ສັດປ່າບັນຊີ I ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ບໍ່ອະນຸຍາດໃຫ້ຄ້າຂາຍຢ່າງເດັດຂາດ.

ສັດປ່າບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ເລີ່ມແຕ່ສາຍພັນ ຮຸ່ນ 2 ແລະ ຮຸ່ນຕໍ່ໄປ ອະນຸຍາດໃຫ້ຄ້າຂາຍໄດ້, ສ່ວນພໍ່ພັນ, ແມ່ພັນ ແລະ ສາຍພັນ ຮຸ່ນ 1 ບໍ່ອະນຸຍາດໃຫ້ຄ້າຂາຍ. ພໍ່ພັນ, ແມ່ພັນໃຫ້ປ່ອຍຄືນສູ່ທຳມະຊາດ, ສ່ວນສາຍພັນ ຮຸ່ນ 1 ໃຫ້ຮັກສາໄວ້ ເປັນພໍ່ພັນ, ແມ່ພັນ ຫຼື ປ່ອຍຄືນສູ່ທຳມະຊາດ.

ສັດປ່າບັນຊີ III ອະນຸຍາດໃຫ້ຄ້າຂາຍ ຕາມກົດໝາຍ.

ການຄ້າຂາຍສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ຢູ່ໃນບັນຊີໄຊເຕັດໃຫ້ປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 19 (ປັບປຸງ) ການເຄື່ອນຍ້າຍສັດປ່າ**

ການເຄື່ອນຍ້າຍສັດປ່າ ບັນຊີ I ແລະ ບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າລະຫວ່າງແຂວງຕໍ່ແຂວງ ຕ້ອງຂໍອະນຸຍາດນຳພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ແລະ ຕ້ອງມີໃບຢັ້ງຢືນຖິ່ນກຳເນີດ, ໃບທະບຽນສັດ ແລະ ໃບຢັ້ງຢືນສຸຂະພາບສັດປ່າ ຕາມແຕ່ລະກໍລະນີ.

ການເຄື່ອນຍ້າຍສັດປ່າ ບັນຊີ I ແລະ ບັນຊີ II ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າລະຫວ່າງເມືອງຕໍ່ເມືອງ ຕ້ອງຂໍອະນຸຍາດນຳຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ແລະ ຕ້ອງມີໃບຢັ້ງຢືນຖິ່ນກຳເນີດ, ໃບທະບຽນສັດ ແລະ ໃບຢັ້ງຢືນສຸຂະພາບສັດປ່າ ຕາມແຕ່ລະກໍລະນີ.

ການເຄື່ອນຍ້າຍສັດປ່າບັນຊີ III ບໍ່ຈຳເປັນຕ້ອງຂໍອະນຸຍາດ ແຕ່ຕ້ອງມີໃບຢັ້ງຢືນສຸຂະພາບສັດປ່າຕາມແຕ່ລະກໍລະນີ.

**ມາດຕາ 20 (ປັບປຸງ) ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດປ່າ**

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດປ່າ ໃຫ້ປະຕິບັດ ດັ່ງນີ້:

1. ສັດປ່າບັນຊີ I ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ແມ່ນ ລັດຖະບານ ເປັນຜູ້ອະນຸຍາດ ຕາມການສະເໜີຂອງກະຊວງກະສິກຳ ແລະ ປ່າໄມ້;
2. ສັດປ່າ ບັນຊີ II ແລະ ບັນຊີ III ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ແມ່ນ ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸຍາດ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ອະນຸມັດແຜນການປະຈຳປີ ສຳລັບການ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ ສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທຸກຊະນິດ ທີ່ຢູ່ໃນບັນຊີໄຊເຕັດ ຕ້ອງປະຕິບັດຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 21 (ປັບປຸງ) ການສ້າງສວນສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງສວນສັດປ່າ ເພື່ອເປັນແຫຼ່ງທ່ອງທ່ຽວ, ສຶກສາຄົ້ນຄວ້າ, ໂຄສະນາ ເຜີຍແຜ່ ແລະ ປູກຈິດສຳນຶກ ໃຫ້ທົ່ວປວງຊົນ ຮູ້ຈັກຄຸນປະໂຫຍດ, ເຊີດຊູສະຕິຮັກ, ຫວງແຫນ, ປົກປັກຮັກສາ ແລະ ພັດທະນາ ສັດປ່າ ໃຫ້ຍືນຍົງ ໃຫ້ຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້.

ມາດຕະຖານ ແລະ ເງື່ອນໄຂ ກ່ຽວກັບການສ້າງສວນສັດປ່າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 22 (ປັບປຸງ) ການສ້າງຟາມສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງຟາມສັດປ່າເພື່ອເອົາສັດປ່າ ຈາກທຳມະຊາດ ຫຼື ໄດ້ມີການຂະຫຍາຍພັນແລ້ວ ມາລ້ຽງ, ຄົ້ນຄວ້າ, ຂະຫຍາຍພັນເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ໃຫ້ຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້.

ມາດຕະຖານ ແລະ ເງື່ອນໄຂ ກ່ຽວກັບການສ້າງຟາມສັດປ່າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 23 (ປັບປຸງ) ການສະແດງລະຄອນສັດປ່າ**

ການນຳເອົາສັດປ່າ ໄປສະແດງລະຄອນຢູ່ສະຖານທີ່ໃດໜຶ່ງພາຍໃນປະເທດ ສາມາດດຳເນີນການໄດ້ໂດຍບໍ່ຕ້ອງຂໍອະນຸຍາດ.

ການນຳເອົາສັດປ່າ ອອກໄປສະແດງລະຄອນຢູ່ຕ່າງປະເທດ ຫຼື ນຳເອົາສັດປ່າຈາກຕ່າງປະເທດ ເຂົ້າມາສະແດງລະຄອນ ຢູ່ ສປປ ລາວ ຕ້ອງຂໍອະນຸຍາດ ນຳອອກ ຫຼື ນຳເຂົ້າ ຊົ່ວຄາວ ນຳລັດຖະບານ ສຳລັບສັດປ່າບັນຊີ I ແລະ ນຳກະຊວງກະສິກຳ ແລະ ປ່າໄມ້ ສຳລັບສັດປ່າ ບັນຊີ II ແລະ ບັນຊີ III ແລະ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ການນຳເອົາສັດປ່າ ອອກໄປສະແດງລະຄອນຢູ່ຕ່າງປະເທດນັ້ນ ເມື່ອຮອດກຳນົດເວລາຕາມສັນຍາແລ້ວ ຕ້ອງນຳສົ່ງສັດປ່ານັ້ນຄືນ. ໃນກໍລະນີສັດປ່າດັ່ງກ່າວ ຫາກມີການອອກລູກ ກໍຕ້ອງນຳສົ່ງລູກມາພ້ອມ, ຖ້າສັດປ່າທີ່ນຳໄປສະແດງລະຄອນ ຫາກຕາຍ ຕ້ອງໄດ້ສົ່ງ ຊາກ ຫຼື ຊິ້ນສ່ວນຂອງສັດປ່ານັ້ນຄືນ ແລະ ມີຄວາມຮັບຜິດຊອບຕາມສັນຍາ.

ການນຳເອົາສັດປ່າໄປສະແດງລະຄອນຢູ່ຕ່າງປະເທດນັ້ນ ຕ້ອງມີ ໃບຢັ້ງຢືນສຸຂະພາບສັດປ່າ, ໃບຢັ້ງຢືນກຳມະສິດສັດປ່າ ຫຼື ສັນຍາ, ສັນຍາຄ້ຳປະກັນ ແລະ ປະຕິບັດຕາມກົດໝາຍຂອງປະເທດນຳເຂົ້າ.

ສຳລັບການນຳເອົາສັດປ່າທີ່ຢູ່ໃນບັນຊີໄຊເຕັດ ໄປສະແດງລະຄອນ ຢູ່ຕ່າງປະເທດ ໃຫ້ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

**ມາດຕາ 24 (ປັບປຸງ) ການສ້າງສາລະຄະດີສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງສາລະຄະດີສັດປ່າ ເພື່ອເຜີຍແຜ່, ປູກຈິດສຳນຶກ ກ່ຽວກັບການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ສັດປ່າ ຕິດພັນກັບການສົ່ງເສີມການທ່ອງທ່ຽວແບບອະນຸລັກ, ວິຖີດຳລົງຊີວິດ ແລະ ວັດທະນະທຳອັນດີງາມ ຂອງປະຊາຊົນລາວບັນດາເຜົ່າ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ.

**ມາດຕາ 25 (ໃໝ່) ການທ່ອງທ່ຽວແບບອະນຸລັກສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດໍາເນີນການທ່ອງທ່ຽວ ທີ່ຕິດພັນກັບການອະນຸລັກສັດປ່າ ຕາມທີ່ລັດຈັດສັນໃຫ້ ແລະ ບໍ່ສົ່ງຜົນກະທົບທາງລົບຕໍ່ຊີວະນານາພັນ ແລະ ສິ່ງແວດລ້ອມ ແຕ່ຕ້ອງຂໍອະນຸຍາດນໍາຂະແໜງການກະສິກໍາ ແລະ ປ່າໄມ້.

**ມາດຕາ 26 (ປັບປຸງ) ພິພິທະພັນສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງສ້າງພິພິທະພັນສັດປ່າ ເພື່ອເປັນສະຖານທີ່ສະສົມ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທຸກປະເພດ ຕ້ອງຂໍອະນຸຍາດນໍາຂະແໜງການທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີຈາກຂະແໜງການກະສິກໍາ ແລະ ປ່າໄມ້.

**ມາດຕາ 27 (ໃໝ່) ການເກັບຮັກສາ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ**

ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ໄດ້ຈາກ ການມອບ, ການສົ່ງຄືນ ຫຼື ການຮິບ ຕ້ອງເກັບຮັກສາໄວ້ໃນສະຖານທີ່ທີ່ປອດໄພ ພາຍໃຕ້ການຄຸ້ມຄອງຂອງຂະແໜງການກະສິກໍາ ແລະ ປ່າໄມ້. ສໍາລັບ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ຢູ່ໃນບັນຊີໄຊເຕັດ ໃຫ້ນໍາມາເກັບຮັກສາໄວ້ ຢູ່ໜ່ວຍງານຄຸ້ມຄອງວຽກງານໄຊເຕັດ.

ສໍາລັບ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ຖືກຍຶດໃນຂະບວນການດໍາເນີນຄະດີ ຕ້ອງໄດ້ນໍາມາເກັບຮັກສາໄວ້ຢູ່ສະຖານທີ່ທີ່ປອດໄພ ພາຍໃຕ້ການຄຸ້ມຄອງຂອງເຈົ້າໜ້າທີ່ປ່າໄມ້ ຈົນກວ່າຈະສິ້ນສຸດການດໍາເນີນຄະດີ. ໃນກໍລະນີ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ມີລັກສະນະເນົ່າເປື່ອຍ ຫຼື ບໍ່ສາມາດເກັບຮັກສາໄວ້ດົນ ຫຼື ເກັບຮັກສາທີ່ນໍາໃຊ້ງົບປະມານສູງ ຕ້ອງແຕ່ງຕັ້ງຄະນະກໍາມະການ ເພື່ອແກ້ໄຂ ຕາມລະບຽບການ.

**ມາດຕາ 28 (ໃໝ່) ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ**

ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ ແມ່ນ ບ່ອນເກັບກໍາ, ສັງລວມ, ເກັບຮັກສາ, ວິເຄາະ, ວິໄຈ ແລະ ສະໜອງຂໍ້ມູນ ຂ່າວສານ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

ກະຊວງກະສິກໍາ ແລະ ປ່າໄມ້ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນໍາໃຊ້ຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ ລວມທັງການສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານດັ່ງກ່າວ ໂດຍປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ພະແນກກະສິກໍາ ແລະ ປ່າໄມ້, ຫ້ອງການກະສິກໍາ ແລະ ປ່າໄມ້ ປັບປຸງລະບົບຂໍ້ມູນ ຂ່າວສານ ສັດປ່າໃຫ້ເຊື່ອມຕໍ່ກັບລະບົບຂໍ້ມູນ ຂ່າວສານ ຂອງກະຊວງກະສິກໍາ ແລະ ປ່າໄມ້ ລວມທັງສະໜອງ ແລະ ແລກປ່ຽນຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ ຕາມຄວາມຮັບຜິດຊອບຂອງຕົນ.

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ສາມາດເຂົ້າເຖິງ ແລະ ນໍາໃຊ້ຂໍ້ມູນ ໃນລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ຕາມການອະນຸຍາດຂອງຂະແໜງການກະສິກໍາ ແລະ ປ່າໄມ້ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 29 (ໃໝ່) ການແກ້ໄຂຂໍ້ຂັດແຍ່ງລະຫວ່າງ ຄົນ ແລະ ສັດປ່າ**

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ປະຊາຊົນ ທີ່ກ່ຽວຂ້ອງ ເພື່ອປ້ອງກັນ ແລະ ຄວບຄຸມ ຂໍ້ຂັດແຍ່ງລະຫວ່າງຄົນ ແລະ ສັດປ່າ.

ໃນກໍລະນີສັດປ່າ ກໍ່ຄວາມເສຍຫາຍ ຕໍ່ ຊີວິດ, ສຸຂະພາບ, ຊັບສິນ ແລະ ຄວາມປອດໄພຂອງຄົນນັ້ນ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ຕ້ອງແກ້ໄຂຢ່າງທັນການ ແລະ ນຳໃຊ້ມາດຕະການ ທີ່ເໝາະສົມຕາມລະບຽບການ ພ້ອມທັງລາຍງານຕໍ່ອົງການທີ່ກ່ຽວຂ້ອງ.

ມາດຕະການແກ້ໄຂຂໍ້ຂັດແຍ່ງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 30 (ໃໝ່) ການຫຼຸດຜ່ອນຜົນກະທົບຕໍ່ສັດປ່າຈາກການພັດທະນາໂຄງການ**

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໂດຍການມີສ່ວນຮ່ວມຂອງປະຊາຊົນ ຄຸ້ມຄອງ, ຕິດຕາມ ແລະ ກວດກາ ໂຄງການລົງທຶນ ເພື່ອຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດຕໍ່ສັດປ່າ ແລະ ຖິ່ນທີ່ຢູ່ອາໄສຂອງສັດປ່າ. ໃນກໍລະນີໂຄງການ ຫາກສົ່ງຜົນກະທົບຕໍ່ສັດປ່າ ຜູ້ພັດທະນາໂຄງການ ຕ້ອງຮັບຜິດຊອບຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ການຊົດເຊີຍຕາມກົດໝາຍ.

ໃນໄລຍະກະກຽມໂຄງການ, ຖ້າຜົນຂອງການປະເມີນຄວາມເປັນໄປໄດ້ ບໍ່ສາມາດທົດແທນຊີວະນານາພັນເທົ່າເດີມ, ໂຄງການດັ່ງກ່າວ ກໍຈະບໍ່ໄດ້ຮັບການອະນຸມັດ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດກ່ຽວກັບການຊົດເຊີຍຜົນກະທົບຕໍ່ສັດປ່າ.

## ໝວດທີ 2
## ການປົກປັກຮັກສາສັດປ່າ

**ມາດຕາ 31 (ປັບປຸງ) ການປົກປັກຮັກສາສັດປ່າ**

ການປົກປັກຮັກສາສັດປ່າ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການສຳຫຼວດສັດປ່າ;
2. ການກຳນົດເຂດປົກປັກຮັກສາສັດປ່າ;
3. ການສ້າງສູນຟື້ນຟູສຸຂະພາບສັດປ່າ;
4. ການປ່ອຍສັດປ່າຄືນສູ່ທຳມະຊາດ;
5. ການສຶກສາຄົ້ນຄວ້າດ້ານວິທະຍາສາດ;
6. ການປູກຈິດສຳນຶກ;
7. ກິດຈະການອື່ນ.

**ມາດຕາ 32 (ປັບປຸງ) ການສຳຫຼວດສັດປ່າ**

ການສຳຫຼວດສັດປ່າ ແມ່ນ ການເກັບກຳຂໍ້ມູນກ່ຽວກັບ ຊະນິດພັນ, ຈຳນວນປະຊາກອນ, ຄວາມຫຼາກຫຼາຍທາງດ້ານພັນທຸກຳ, ສະພາບການຄົງຕົວ, ການຂະຫຍາຍຕົວ, ຖິ່ນທີ່ຢູ່ອາໄສ, ເຂດປົກປັກຮັກສາພັນ ສັດປ່າ ແລະ ອື່ນໆ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການສຳຫຼວດ ແລະ ສ້າງລະບົບຖານຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ ເພື່ອສະໜອງໃຫ້ແກ່ການວາງແຜນພັດທະນາໃນແຕ່ລະເຂດ ແຕ່ລະໄລຍະ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງໃນການສຳຫຼວດສັດປ່າ ຕ້ອງຂໍອະນຸຍາດນຳຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 33 (ປັບປຸງ) ການກຳນົດເຂດປົກປັກຮັກສາສັດປ່າ**

ຂະແໜງການກະສິກຳ ແລະ ປ່າໄມ້ ປະສານສົມທົບກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ກຳນົດ ຖິ່ນທີ່ຢູ່ອາໄສ, ເຂດອະນຸລັກພັນ ແລະ ແຫຼ່ງອາຫານ ຂອງສັດປ່າ ຕາມຂໍ້ມູນຕົວຈິງທີ່ໄດ້ຈາກການສຳຫຼວດ ດ້ວຍການເຂົ້າຮ່ວມຂອງປະຊາຊົນ ພ້ອມທັງອອກລະບຽບການໃນການຄຸ້ມຄອງເຂດປົກປັກຮັກສາສັດປ່າ ຕາມຄວາມຮັບຜິດຊອບຂອງຕົນ.

**ມາດຕາ 34 (ໃໝ່) ການສ້າງສູນຟື້ນຟູສຸຂະພາບສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງສ້າງສູນຟື້ນຟູສຸຂະພາບສັດປ່າ ເພື່ອເປັນບ່ອນ ພັກຟື້ນ, ປິ່ນປົວ ສັດປ່າ ທີ່ຕິດເຊື້ອພະຍາດ, ບາດເຈັບ ຫຼື ອ່ອນເພຍ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້.

ໃນກໍລະນີສັດປ່າ ທີ່ຖືກຍຶດ, ອາຍັດ, ຮິບ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມອບໃຫ້ ຕ້ອງໄດ້ນຳມາກວດສຸຂະພາບ, ຟື້ນຟູ ແລະ ປິ່ນປົວ ຢູ່ສູນຟື້ນຟູສຸຂະພາບສັດປ່າ ຕາມແຕ່ລະກໍລະນີ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການ ກ່ຽວກັບການສ້າງສູນຟື້ນຟູສຸຂະພາບສັດປ່າ.

**ມາດຕາ 35 (ໃໝ່) ການປ່ອຍສັດປ່າຄືນສູ່ທຳມະຊາດ**

ການປ່ອຍສັດປ່າຄືນສູ່ທຳມະຊາດ ຕ້ອງຈັດຕັ້ງປະຕິບັດ ຢູ່ພື້ນທີ່ປ່າໄມ້ ຫຼື ຖິ່ນທີ່ຢູ່ອາໄສທຳມະຊາດ ທີ່ມີຄວາມເໝາະສົມ, ມີສະພາບແວດລ້ອມທີ່ສັດຊະນິດພັນນັ້ນ ສາມາດອາໄສຢູ່ໄດ້ ແລະ ບໍ່ສົ່ງຜົນກະທົບຕໍ່ຊະນິດພັນອື່ນ ໂດຍມີການຄຸ້ມຄອງ, ປົກປັກຮັກສາຢ່າງເຂັ້ມງວດ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການກ່ຽວກັບການປ່ອຍສັດປ່າຄືນສູ່ທຳມະຊາດ.

**ມາດຕາ 36 (ປັບປຸງ) ການສຶກສາຄົ້ນຄວ້າດ້ານວິທະຍາສາດ**

ການສຶກສາຄົ້ນຄວ້າດ້ານວິທະຍາສາດ ແມ່ນ ການດຳເນີນ ການວິເຄາະ, ວິໄຈ ກ່ຽວກັບຊະນິດພັນ, ການຂະຫຍາຍພັນ, ສືບພັນ, ພັນທຸກຳ, ອາຫານ, ການຈະເລີນເຕີບໂຕ, ລະບົບນິເວດ ແລະ ຄຸນປະໂຫຍດ ລວມທັງການຊອກຫາຮູບແບບ ແລະ ມາດຕະຖານເຕັກນິກ ເພື່ອນຳໃຊ້ເຂົ້າໃນວຽກງານສັດປ່າ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ສາມາດດຳເນີນການຄົ້ນຄວ້າດ້ານວິທະຍາສາດ ກ່ຽວກັບສັດປ່າ ພ້ອມທັງການລົງທຶນ ສ້າງສະຖາບັນ ຫຼື ສູນຄົ້ນຄວ້າດ້ານວິທະຍາສາດ ຕາມການອະນຸຍາດຂອງຂະແໜງການທີ່ກ່ຽວຂ້ອງ ແລະ ຖືກຕ້ອງຕາມກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

ການນຳເອົາຕົວຢ່າງ ສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ໄປຄົ້ນຄວ້າດ້ານວິທະຍາສາດ ຢູ່ຕ່າງປະເທດ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້. ພາຍຫຼັງສຳເລັດການຄົ້ນຄວ້າດ້ານວິທະຍາສາດແລ້ວ ຕ້ອງສົ່ງຜົນການຄົ້ນຄວ້າ ໃຫ້ກະຊວງກະສິກຳ ແລະ ປ່າໄມ້ ພາຍໃນເວລາ ສິບຫ້າວັນ.

ຜູ້ໄດ້ຮັບອະນຸຍາດ ແລະ ໄດ້ຮັບຜົນປະໂຫຍດ ຈາກການຄົ້ນຄວ້າດ້ານວິທະຍາສາດ ຕ້ອງໄດ້ແບ່ງປັນຜົນປະໂຫຍດໃຫ້ລັດ ຕາມການຕົກລົງ.

**ມາດຕາ 37 (ໃໝ່) ການປູກຈິດສໍານຶກ**

ການປູກຈິດສໍານຶກ ແມ່ນ ການໂຄສະນາ ເຜີຍແຜ່ ແລະ ສຶກສາອົບຮົມ ກ່ຽວກັບຄວາມໝາຍ ແລະ ຄວາມສໍາຄັນຂອງວຽກງານສັດປ່າ ໂດຍຜ່ານສື່ມວນຊົນ, ການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກໍາກ່ຽວກັບວຽກງານສັດປ່າ ເພື່ອປຸກລະດົມທົ່ວປວງຊົນ ເຊີດຊູສະຕິຮັກ, ຫວງແຫນ, ຖະໜອມ, ປ່ຽນແປງພຶດຕິກໍາໃນການນໍາໃຊ້ສັດປ່າ ແລະ ເປັນເຈົ້າການເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ສັດປ່າແບບຍືນຍົງ.

ຂະແໜງການກະສິກໍາ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການປູກຈິດສໍານຶກ.

## ໝວດທີ 3
## ການພັດທະນາສັດປ່າ

**ມາດຕາ 38 (ປັບປຸງ) ການພັດທະນາສັດປ່າ**

ການພັດທະນາສັດປ່າ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການຂະຫຍາຍພັນສັດປ່າ;
2. ການລ້ຽງສັດປ່າ;
3. ກິດຈະການອື່ນ.

**ມາດຕາ 39 (ປັບປຸງ) ການຂະຫຍາຍພັນສັດປ່າ**

ການຂະຫຍາຍພັນສັດປ່າ ແມ່ນ ການເພີ່ມຈໍານວນປະຊາກອນສັດປ່າ ແລະ ຄວາມຫຼາກຫຼາຍທາງດ້ານພັນທຸກໍາ ດ້ວຍການປະສົມພັນແບບ ທໍາມະຊາດ, ເຄິ່ງທໍາມະຊາດ, ການປະສົມພັນທຽມ ຫຼື ການນໍາໃຊ້ເຕັກນິກວິຊາການອື່ນ ລວມທັງການຟື້ນຟູບູລະນະ ຖິ່ນທີ່ຢູ່ອາໄສ ທີ່ເສື່ອມໂຊມ, ແຫຼ່ງອາຫານ ແລະ ແຫຼ່ງແຜ່ພັນ ເພື່ອປ້ອງກັນການສູນພັນຂອງສັດປ່າ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງຂະຫຍາຍພັນສັດປ່າ ຕ້ອງປະຕິບັດຕາມ ນະໂຍບາຍ, ວິທີການ, ລະບຽບການ ແລະ ມາດຕະຖານເຕັກນິກ ທີ່ຂະແໜງການກະສິກໍາ ແລະ ປ່າໄມ້ ກໍານົດ.

**ມາດຕາ 40 (ປັບປຸງ) ການລ້ຽງສັດປ່າ**

ການລ້ຽງສັດປ່າ ແມ່ນ ການນໍາເອົາສັດປ່າ ມາລ້ຽງໃນສະຖານທີ່ ທີ່ເໝາະສົມ ແລະ ຖືກຕ້ອງຕາມມາດຕະຖານເຕັກນິກ ຊຶ່ງມີການຄຸ້ມຄອງ, ການປົກປັກຮັກສາ, ການນໍາໃຊ້ແນວພັນ ແລະ ການບໍລິຫານຈັດການເພື່ອເຮັດໃຫ້ສັດປ່າ ມີສຸຂະພາບແຂງແຮງ, ຈະເລີນເຕີບໂຕ, ມີຜົນຜະລິດຫຼາຍຂຶ້ນ ແລະ ບໍ່ມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ.

ສັດປ່າບັນຊີ I ທີ່ໄດ້ມາຈາກທຳມະຊາດ ຫຼື ຈາກບ່ອນອື່ນທີ່ບໍ່ໄດ້ຂະຫຍາຍພັນ ບໍ່ອະນຸຍາດໃຫ້ລ້ຽງຢ່າງເດັດຂາດ, ເວັ້ນເສຍແຕ່ກໍລະນີຈຳເປັນ ເພື່ອການສຶກສາຄົ້ນຄວ້າ ແລະ ການຂະຫຍາຍພັນທີ່ບໍ່ແມ່ນຈຸດປະສົງທາງການຄ້າ.

ສັດປ່າບັນຊີ II ອະນຸຍາດໃຫ້ລ້ຽງ ເພື່ອສຶກສາຄົ້ນຄວ້າ ແລະ ຂະຫຍາຍພັນ. ໃນກໍລະນີສັດປ່າຊະນິດດັ່ງກ່າວ ຫາກໄດ້ຂະຫຍາຍພັນແລ້ວ ເລີ່ມແຕ່ສາຍພັນ ຮຸ່ນ 1 ແລະ ຮຸ່ນຕໍ່ໄປ ອະນຸຍາດໃຫ້ລ້ຽງແບບຄອບຄົວ ແລະ ແບບທຸລະກິດຕາມກົດໝາຍ.

ສັດປ່າບັນຊີ III ອະນຸຍາດໃຫ້ລ້ຽງ ແບບຄອບຄົວ ແລະ ແບບທຸລະກິດ ຕາມກົດໝາຍ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດມາດຕະຖານເຕັກນິກ ກ່ຽວກັບການລ້ຽງສັດປ່າ.

## ໝວດທີ 4
## ການນຳໃຊ້ສັດປ່າ

### ມາດຕາ 41 (ປັບປຸງ) ປະເພດການນຳໃຊ້ສັດປ່າ

ການນຳໃຊ້ສັດປ່າ ມີ ສີ່ ປະເພດ ດັ່ງນີ້:

1. ການນຳໃຊ້ເພື່ອສາທາລະນະປະໂຫຍດ;
2. ການນຳໃຊ້ເພື່ອຄອບຄົວ;
3. ການນຳໃຊ້ຕາມປະເພນີ;
4. ການນຳໃຊ້ເພື່ອທຸລະກິດ.

ການນຳໃຊ້ສັດປ່າ ທຸກປະເພດ ຕ້ອງຮັບປະກັນຄວາມຍືນຍົງ, ຄວາມສົມດູນຂອງລະບົບນິເວດ ແລະ ບໍ່ໃຫ້ມີຜົນກະທົບທາງລົບຕໍ່ສິ່ງແວດລ້ອມ.

### ມາດຕາ 42 (ປັບປຸງ) ການນຳໃຊ້ເພື່ອສາທາລະນະປະໂຫຍດ

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳເອົາສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ມາຮັບໃຊ້ຜົນປະໂຫຍດສ່ວນລວມ ເປັນຕົ້ນ ການສຶກສາຄົ້ນຄວ້າດ້ານວິທະຍາສາດ, ການທ່ອງທ່ຽວ, ການກິລາ ແຕ່ຕ້ອງປະຕິບັດຕາມກົດໝາຍ.

ການນຳໃຊ້ສັດປ່າບັນຊີ I ເພື່ອສາທາລະນະປະໂຫຍດ ຕ້ອງຂໍອະນຸຍາດນຳກະຊວງກະສິກຳ ແລະ ປ່າໄມ້ ຕາມການສະເໜີຂອງພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ.

ການນຳໃຊ້ສັດປ່າບັນຊີ II ເພື່ອສາທາລະນະປະໂຫຍດ ຕ້ອງຂໍອະນຸຍາດນຳພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຕາມການສະເໜີຂອງຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ.

ການນຳໃຊ້ສັດປ່າບັນຊີ III ເພື່ອສາທາລະນະປະໂຫຍດ ສາມາດນຳໃຊ້ໄດ້ໂດຍບໍ່ຕ້ອງຂໍອະນຸຍາດ.

### ມາດຕາ 43 (ປັບປຸງ) ການນຳໃຊ້ເພື່ອຄອບຄົວ

ການນຳໃຊ້ເພື່ອຄອບຄົວ ແມ່ນ ການນຳເອົາສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນສັດປ່າບັນຊີ III ມານຳໃຊ້ເພື່ອ ບໍລິໂພກ, ເອ້ຍ້ອງ ແລະ ອື່ນໆ ຕາມລະດູການ ແລະ ສະຖານທີ່ທີ່ອະນຸຍາດ, ນຳໃຊ້ວິທີການ ແລະ ເຄື່ອງມືທີ່ບໍ່ມີລັກສະນະດັບສູນ.

ສຳລັບການນຳໃຊ້ສັດປ່າບັນຊີ II ເພື່ອຄອບຄົວ ຕ້ອງຂໍອະນຸຍາດ ຕາມລະບຽບການ.

**ມາດຕາ 44 (ປັບປຸງ) ການນຳໃຊ້ຕາມປະເພນີ**

ການນຳໃຊ້ຕາມປະເພນີ ແມ່ນ ການນຳເອົາສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ບັນຊີ II ແລະ ບັນຊີ III ມານຳໃຊ້ເພື່ອຄວາມຈຳເປັນທາງດ້ານວັດທະນະທຳ ຫຼື ຄວາມເຊື່ອຖື ທີ່ເຄີຍປະຕິບັດກັນມາ ເປັນຕົ້ນ ການປ່ອຍນົກ, ປ່ອຍເຕົ່າ, ປ່ອຍງູ, ເຄື່ອງສັກກະລະບູຊາ.

**ມາດຕາ 45 (ປັບປຸງ) ການນຳໃຊ້ເພື່ອທຸລະກິດ**

ການນຳໃຊ້ເພື່ອທຸລະກິດ ແມ່ນ ການນຳເອົາສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ເພື່ອດຳເນີນທຸລະກິດ ເປັນຕົ້ນ ສວນສັດປ່າ, ຟາມສັດປ່າ, ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ, ການສົ່ງຜ່ານ, ການສ້າງສາລະຄະດີສັດປ່າ.

ການນຳໃຊ້ເພື່ອທຸລະກິດ ຕ້ອງປະຕິບັດໃຫ້ສອດຄ່ອງກັບ ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ໝວດທີ 5
## ການປ້ອງກັນ ແລະ ຄວບຄຸມ ພະຍາດສັດປ່າ

**ມາດຕາ 46 (ໃໝ່) ການປ້ອງກັນພະຍາດສັດປ່າ**

ການປ້ອງກັນພະຍາດສັດປ່າ ແມ່ນ ການກຳນົດແຜນການ ແລະ ມາດຕະການດ້ານວິຊາການ ກ່ອນການເກີດພະຍາດ ເພື່ອກັນ ແລະ ຫຼຸດຜ່ອນປັດໄຈສ່ຽງ ທີ່ຈະພາໃຫ້ເກີດພະຍາດສັດປ່າ ລວມທັງການເຝົ້າລະວັງພະຍາດສັດປ່າ ແລະ ການແຈ້ງການ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລ້ຽງສັດປ່າ ຕ້ອງດຳເນີນການປ້ອງກັນພະຍາດຢ່າງເປັນປົກກະຕິ ຕາມການແນະນຳ ຂອງຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 47 (ໃໝ່) ພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ**

ພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ ແມ່ນ ພະຍາດສັດປ່າທີ່ຮ້າຍແຮງ ທີ່ສາມາດຕິດຕໍ່ຈາກສັດປ່າ ສູ່ ສັດປ່າ ຫຼື ສັດລ້ຽງ, ສັດປ່າ ສູ່ ຄົນ ຊຶ່ງມີການແຜ່ລາມໄວ, ສ້າງຜົນກະທົບທາງລົບ ຕໍ່ ຊີວິດ, ສຸຂະພາບ ຂອງສັດ ແລະ ຄົນ, ເສດຖະກິດ ແລະ ສັງຄົມ.

ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງກຳນົດບັນຊີພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ ບົນພື້ນຖານບັນຊີພະຍາດສັດປ່າ ທີ່ຈຳເປັນຕ້ອງແຈ້ງຂອງອົງການສຸຂະພາບສັດສາກົນ ແລ້ວປະກາດໃຫ້ສາທາລະນະຊົນຮັບຮູ້ ໃນແຕ່ລະໄລຍະ.

**ມາດຕາ 48 (ໃໝ່) ການເຝົ້າລະວັງພະຍາດສັດປ່າ**

ການເຝົ້າລະວັງພະຍາດສັດປ່າ ແມ່ນ ການຕິດຕາມ, ເກັບກຳ ແລະ ວິເຄາະຂໍ້ມູນ ຂ່າວສານ ກ່ຽວກັບສຸຂະພາບ ແລະ ພະຍາດສັດປ່າ ຢ່າງເປັນລະບົບ ລວມທັງການລາຍງານ ແລະ ແຈ້ງຂໍ້ມູນ ຂ່າວສານ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການປ້ອງກັນ ແລະ ຄວບຄຸມພະຍາດໃຫ້ທັນການ.

ຂະແໜງການກະສິກຳ ແລະ ປ່າໄມ້ ປະສານສົມທົບກັບຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ ດຳເນີນການເຝົ້າລະວັງພະຍາດສັດປ່າ ໃຫ້ມີປະສິດທິຜົນ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ສ້າງແຜນເຝົ້າລະວັງ ແລະ ຄູ່ມືແນະນຳ ການເຝົ້າລະວັງພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ ແຕ່ລະປະເພດ.

**ມາດຕາ 49 (ໃໝ່) ການລາຍງານພະຍາດສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພົບເຫັນ ຫຼື ສົງໄສ ສັດປ່າ ຕິດພະຍາດທີ່ຈຳເປັນຕ້ອງແຈ້ງ ຫຼື ຕາຍເປັນຈຳນວນຫຼາຍ ໃນໄລຍະເວລາທີ່ໃກ້ຄຽງກັນ ຕ້ອງລາຍງານໃຫ້ອົງການຄຸ້ມຄອງວຽກງານສັດປ່າ ພາຍໃນເວລາ ຊາວສີ່ຊົ່ວໂມງ.

ໃນກໍລະນີໄດ້ຮັບການຢັ້ງຢືນ ການພົບເຊື້ອພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງແລ້ວ ກະຊວງກະສິກຳ ແລະ ປ່າໄມ້ ຕ້ອງອອກແຈ້ງການຢ່າງເປັນລາຍລັກອັກສອນ ໃຫ້ແກ່ສາທາລະນະຊົນ ແລະ ລາຍງານໃຫ້ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ. ໃນກໍລະນີພະຍາດສັດປ່າຕິດຕໍ່ສູ່ຄົນ ກໍຕ້ອງແຈ້ງໃຫ້ຂະແໜງການສາທາລະນະສຸກ ພາຍໃນເວລາ ຊາວສີ່ຊົ່ວໂມງ.

ໃນກໍລະນີ ກວດພົບ ຫຼື ຢັ້ງຢືນ ສາເຫດການຕາຍຂອງສັດປ່າຈຳນວນຫຼາຍ ທີ່ບໍ່ແມ່ນພະຍາດທີ່ຈຳເປັນຕ້ອງແຈ້ງ ອົງການຄຸ້ມຄອງວຽກງານສັດປ່າ ຕ້ອງແຈ້ງໃຫ້ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອແກ້ໄຂ.

**ມາດຕາ 50 (ໃໝ່) ການປະກາດ ແລະ ການຍົກເລີກ ເຂດລະບາດພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ**

ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ເປັນຜູ້ປະກາດ ແລະ ຍົກເລີກ ເຂດລະບາດພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງຕາມການສະເໜີຂອງຂະແໜງການກະສິກຳ ແລະ ປ່າໄມ້ ຕາມກໍລະນີ ດັ່ງນີ້:

1. ຖ້າພະຍາດລະບາດເກີດຂຶ້ນໃນຂອບເຂດ ເມືອງ, ເທດສະບານ, ນະຄອນ ໃດໜຶ່ງ ໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ນັ້ນ ເປັນຜູ້ປະກາດ ແລະ ຍົກເລີກ;
2. ຖ້າພະຍາດລະບາດເກີດຂຶ້ນຫຼາຍກວ່າໜຶ່ງ ເມືອງ, ເທດສະບານ, ນະຄອນ ແຕ່ຢູ່ໃນຂອບເຂດແຂວງໃດໜຶ່ງ ຫຼື ນະຄອນຫຼວງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ນັ້ນ ເປັນຜູ້ປະກາດ ແລະ ຍົກເລີກ;
3. ຖ້າພະຍາດລະບາດເກີດຂຶ້ນຫຼາຍກວ່າໜຶ່ງແຂວງ ໃຫ້ນາຍົກລັດຖະມົນຕີເປັນຜູ້ປະກາດ ແລະ ຍົກເລີກ.

ໃນການປະກາດເປັນເຂດລະບາດພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງນັ້ນ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງກຳນົດເຂດຂອງການຄວບຄຸມ ແລະ ເຝົ້າລະວັງໃຫ້ຈະແຈ້ງ ພ້ອມທັງແຕ່ງຕັ້ງ ແລະ ກຳນົດໜ້າທີ່, ຄວາມຮັບຜິດຊອບຂອງຄະນະສະເພາະກິດ ເພື່ອຄວບຄຸມການລະບາດ, ວາງມາດຕະການ ແລະ ແຈ້ງເຕືອນບໍ່ໃຫ້ມີການເຄື່ອນຍ້າຍສັດປ່າ, ຊາກ, ຊີ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ເຂົ້າ, ອອກ ຫຼື ຜ່ານເຂດດັ່ງກ່າວ ໂດຍບໍ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ.

ເຂດລະບາດພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ ຈະຖືກຍົກເລີກໄດ້ ກໍຕໍ່ເມື່ອຂະແໜງການກະສິກຳ ແລະ ປ່າໄມ້ ຫາກໄດ້ນຳໃຊ້ມາດຕະການຄວບຄຸມການລະບາດຢ່າງຄົບຖ້ວນ ແລະ ໝັ້ນໃຈວ່າການລະບາດດັ່ງກ່າວໄດ້ສະຫງົບລົງແລ້ວ ຈຶ່ງແຈ້ງໃຫ້ອົງການປົກຄອງທ້ອງຖິ່ນ ຫຼື ລັດຖະບານ ປະກາດຍົກເລີກເຂດລະບາດພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ ຢ່າງເປັນທາງການ.

**ມາດຕາ 51 (ໃໝ່) ການຄວບຄຸມພະຍາດສັດປ່າ**

ການຄວບຄຸມພະຍາດສັດປ່າ ແມ່ນ ການຈຳກັດພະຍາດທີ່ພວມເກີດຂຶ້ນ ບໍ່ໃຫ້ແຜ່ລາມອອກສູ່ວົງກວ້າງ ແລະ ມີຜົນກະທົບຮ້າຍແຮງ ຕໍ່ ຊີວິດ, ສຸຂະພາບ ຂອງສັດ ແລະ ຄົນ, ຊັບສິນຂອງ ລັດ, ລວມໝູ່ ແລະ ຂອງປະຊາຊົນ.

ໃນກໍລະນີເກີດການລະບາດຂອງພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ນຳໃຊ້ມາດຕະການໃດໜຶ່ງ ຫຼື ທັງໝົດ ເພື່ອຕອບໂຕ້ການລະບາດ ດັ່ງນີ້:

1. ທຳລາຍສັດປ່າທີ່ຢັ້ງຢືນວ່າ ຕິດເຊື້ອພະຍາດສັດປ່າ;

2. ກັກ ຫຼື ທຳລາຍ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ, ສິ່ງເສດເຫຼືອ ຫຼື ວັດຖຸປະກອນຕ່າງໆ ທີ່ມີຄວາມສ່ຽງ ທີ່ຈະນຳເອົາເຊື້ອພະຍາດແຜ່ລາມໄປສູ່ເຂດອື່ນ;

3. ອະນາໄມ ແລະ ຂ້າເຊື້ອພະຍາດ ແລະ ວັດຖຸປະກອນ ທີ່ປົນເປື້ອນດ້ວຍເຊື້ອພະຍາດ;

4. ແຈ້ງເຕືອນ ແລະ ຄວບຄຸມ ການເຄື່ອນຍ້າຍ ພາຫະນຳເຊື້ອພະຍາດ ເປັນຕົ້ນ ຄົນ, ສັດປ່າທີ່ມີຊີວິດ ແລະ ພາຫະນະຂົນສົ່ງຜະລິດຕະພັນສັດປ່າ ເຂົ້າ-ອອກ ເຂດທີ່ເກີດການລະບາດ;

5. ງົດການຂະຫຍາຍພັນສັດປ່າ ຢູ່ໃນເຂດທີ່ກຳລັງເກີດການລະບາດ;

6. ໃຫ້ຢາ ຫຼື ສານເຄມີ ເພື່ອປ້ອງກັນພະຍາດສັດປ່າ ໃນເຂດທີ່ບໍ່ທັນມີການລະບາດ;

7. ເຝົ້າລະວັງພະຍາດ ແລະ ນຳໃຊ້ມາດຕະການດ້ານສຸຂານາໄມໃດໜຶ່ງ ໂດຍອີງຕາມການວິເຄາະຄວາມສ່ຽງ ໃນເຂດທີ່ເກີດການລະບາດ ເພື່ອຮັບປະກັນໃຫ້ການລະບາດຂອງພະຍາດສະຫງົບລົງ;

8. ຈັດຕັ້ງການໂຄສະນາ, ສຶກສາອົບຮົມ ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງຮັບຮູ້ ແລະ ເຂົ້າຮ່ວມໃນການກັນ ແລະ ຄວບຄຸມພະຍາດ.

ໃນກໍລະນີມີການນຳໃຊ້ຢາ ເພື່ອປ້ອງກັນ ແລະ ປິ່ນປົວ ຫຼື ຄວບຄຸມ ພະຍາດສັດປ່າທີ່ຈຳເປັນຕ້ອງແຈ້ງ ຕ້ອງປະຕິບັດຕາມຄຳແນະນຳຂອງກະຊວງກະສິກຳ ແລະ ປ່າໄມ້.

## ພາກທີ IV
## ທຸລະກິດ ກ່ຽວກັບສັດປ່າ

**ມາດຕາ 52 (ປັບປຸງ) ການດຳເນີນທຸລະກິດກ່ຽວກັບສັດປ່າ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບສັດປ່າ ໃຫ້ແຈ້ງຂຶ້ນທະບຽນວິສາຫະກິດ ນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ. ພາຍຫຼັງໄດ້ຂຶ້ນທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ນຳຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 53 (ໃໝ່) ປະເພດທຸລະກິດກ່ຽວກັບສັດປ່າ**

ປະເພດທຸລະກິດກ່ຽວກັບສັດປ່າ ມີ ດັ່ງນີ້:

1. ສວນສັດປ່າ;

2. ຟາມສັດປ່າ;

3. ການຂະຫຍາຍພັນສັດປ່າ;

4. ການຄ້າ ຂາຍ ສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ;

5. ການເຄື່ອນຍ້າຍສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ;

6. ການນຳເຂົ້າ, ການສົ່ງອອກ, ການສົ່ງອອກຄືນ ແລະ ການສົ່ງຜ່ານ ສັດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ;

7. ການສະແດງລະຄອນສັດປ່າ;

8. ທຸລະກິດອື່ນກ່ຽວກັບສັດປ່າ.

ການແບ່ງຂັ້ນຄຸ້ມຄອງການອະນຸຍາດດຳເນີນທຸລະກິດ ກ່ຽວກັບສັດປ່າ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 54 (ໃໝ່) ເງື່ອນໄຂຂອງການດຳເນີນທຸລະກິດ ກ່ຽວກັບສັດປ່າ**

ການດຳເນີນທຸລະກິດ ກ່ຽວກັບສັດປ່າ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີໃບທະບຽນວິສາຫະກິດ;
2. ມີເນື້ອທີ່, ທຶນ, ສິ່ງປຸກສ້າງ, ອຸປະກອນ, ເຄື່ອງມື ແລະ ພາຫະນະຮັບໃຊ້ຢ່າງເໝາະສົມ;
3. ມີບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ມີນັກວິຊາການທີ່ມີຄວາມຮູ້ດ້ານສັດປ່າ ລະດັບຊັ້ນກາງຂຶ້ນໄປ ແລະ ມີໃບຢັ້ງຢືນການຜ່ານການປະຕິບັດວຽກງານຕົວຈິງ ສຳລັບທຸລະກິດກ່ຽວກັບສັດປ່າ;
5. ມີເງື່ອນໄຂອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 55 (ໃໝ່) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ມີ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
2. ສຳເນົາໃບທະບຽນວິສາຫະກິດ;
3. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ເອກະສານອື່ນ ຕາມແຕ່ລະປະເພດທຸລະກິດ.

**ມາດຕາ 56 (ໃໝ່) ການພິຈາລະນາ ອອກໃບອະນຸຍາດດຳເນີນທຸລະກິດ**

ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບສັດປ່າ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບຢ່າງຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

ໃນກໍລະນີບໍ່ສາມາດ ອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບສັດປ່າໄດ້ ຕ້ອງແຈ້ງເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍ ພາຍໃນກຳນົດເວລາດັ່ງກ່າວ.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ ຂັ້ນຕອນ, ເງື່ອນໄຂ ແລະ ເອກະສານປະກອບໃນການອະນຸຍາດດຳເນີນທຸລະກິດກ່ຽວກັບສັດປ່າ.

**ມາດຕາ 57 (ໃໝ່) ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບສັດປ່າ ມີອາຍຸການນຳໃຊ້ ໜຶ່ງປີ ແລະ ສາມາດຕໍ່ໄດ້. ໃບອະນຸຍາດດຳເນີນທຸລະກິດ ບໍ່ສາມາດໂອນ ຫຼື ມອບໃຫ້ບຸກຄົນອື່ນນຳໃຊ້.

**ມາດຕາ 58 (ປັບປຸງ) ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດ ກ່ຽວກັບສັດປ່າ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມ ການອະນຸຍາດ, ມາດຕະຖານເຕັກນິກ ແລະ ກົດໝາຍ;
2. ໄດ້ຮັບຂໍ້ມູນ ຂ່າວສານ ກ່ຽວກັບວຽກງານສັດປ່າ;
3. ຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ກ່ຽວກັບການລະເມີດກົດໝາຍ ຂອງເຈົ້າໜ້າທີ່ປ່າໄມ້ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ;
4. ປະກອບສ່ວນ ທາງດ້ານທຶນ ຫຼື ແຮງງານ ເຂົ້າໃນການພັດທະນາວຽກງານສັດປ່າ;
5. ໃຫ້ການຮ່ວມມື, ສະໜອງຂໍ້ມູນ ຂ່າວສານ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຂະແໜງການກະສິກຳ ແລະ ປ່າໄມ້;
6. ເສຍຄ່າທຳນຽມ, ຄ່າບໍລິການ ແລະ ພັນທະອື່ນ ຕາມກົດໝາຍ;
7. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 (ໃໝ່) ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດກ່ຽວກັບສັດປ່າ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍທີ່ກ່ຽວຂ້ອງ.

ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ແກ້ໄຂ ແລະ ປັບປຸງ ຕາມການແຈ້ງເຕືອນແລ້ວ ໃຫ້ຂະແໜງການກະສິກຳ ແລະ ປ່າໄມ້ ສັ່ງໂຈະການດຳເນີນທຸລະກິດ.

**ມາດຕາ 60 (ໃໝ່) ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດກ່ຽວກັບສັດປ່າ ຈະຖືກຖອນ ໃນກໍລະນີຜູ້ດຳເນີນທຸລະກິດ ບໍ່ປະຕິບັດຕາມຄຳສັ່ງໂຈະ. ພາຍຫຼັງໄດ້ຖອນໃບອະນຸຍາດດຳເນີນທຸລະກິດແລ້ວ ຂະແໜງການກະສິກຳ ແລະ ປ່າໄມ້ ຕ້ອງແຈ້ງໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຖອນໃບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ.

## ພາກທີ V
## ຂໍ້ຫ້າມ

**ມາດຕາ 61 (ປັບປຸງ) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ໃຫ້ສິນບົນ, ເປັນສື່ກາງໃນການໃຫ້ ຫຼື ຮັບ ສິນບົນ;
2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;
3. ຄອບຄອງ, ຊື້ ຂາຍ, ລ່າ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ, ສົ່ງຜ່ານ ຫຼື ເຄື່ອນຍ້າຍ ສັດປ່າລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ທໍລະມານສັດປ່າ ທຸກຮູບແບບ;

5. ຜະລິດ, ນຳເຂົ້າ, ຈຳໜ່າຍ ແລະ ນຳໃຊ້ ອາວຸດ ຫຼື ເຄື່ອງມືລ່າ ທີ່ມີລັກສະນະດັບສູນ ເຊັ່ນ ລະເບີດ, ທາດເຄມີ, ທາດເບື່ອ, ໄຟຟ້າ, ແສງ, ສຽງ, ຄື້ນ ແລະ ອື່ນໆ;

6. ບຸກລຸກທຳລາຍ ເຂດອະນຸລັກພັນສັດປ່າ, ຖິ່ນທີ່ຢູ່ອາໄສ ແລະ ແຫຼ່ງອາຫານ ຂອງສັດປ່າ ໂດຍທາງກົງ ຫຼື ທາງອ້ອມ;

7. ປ່ອຍສັດປ່າຕ່າງຖິ່ນທີ່ມີຄວາມສ່ຽງທຳລາຍສັດປ່າ ພື້ນເມືອງ ແລະ ລະບົບນິເວດ;

8. ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກໝາຍເຂດອະນຸລັກພັນສັດປ່າ;

9. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 62 (ໃໝ່) ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມ ຜູ້ດຳເນີນທຸລະກິດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມກົດໝາຍ ແລະ ຕາມການອະນຸຍາດ;

2. ໂອນ ຫຼື ໃຫ້ເຊົ່າ ໃບອະນຸຍາດດຳເນີນທຸລະກິດ;

3. ບັງຄັບ, ນາບຂູ່ ແລະ ໃຊ້ວາຈາທີ່ບໍ່ເໝາະສົມຕໍ່ ເຈົ້າໜ້າທີ່ ຫຼື ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ;

4. ໃຫ້ສິນບົນແກ່ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ ຫຼື ຮ່ວມກັນສໍ້ໂກງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 63 (ປັບປຸງ) ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ**

ຫ້າມ ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງກັບວຽກງານສັດປ່າ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ບັງຄັບ, ນາບຂູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່;

4. ກົດໜ່ວງ, ຖ່ວງດຶງ ແລະ ທຳລາຍເອກະສານ;

5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການ ແລະ ນຳໃຊ້ລາຍຮັບວິຊາການ ໂດຍບໍ່ຖືກຕ້ອງ;

6. ດຳເນີນ ຫຼື ເຂົ້າຮ່ວມ ການດຳເນີນທຸລະກິດ ກ່ຽວກັບສັດປ່າ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VI
## ການດຳເນີນຄະດີ ກ່ຽວກັບສັດປ່າ

**ມາດຕາ 64 (ໃໝ່) ການດຳເນີນຄະດີ ກ່ຽວກັບສັດປ່າ**

ການດຳເນີນຄະດີ ກ່ຽວກັບສັດປ່າ ແມ່ນ ການເຄື່ອນໄຫວ ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ຜູ້ເຂົ້າຮ່ວມອື່ນ ເພື່ອຊອກໃຫ້ເຫັນການກະທຳຜິດ

ຢ່າງຮີບດ່ວນ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ນຳເອົາຜູ້ກະທຳຜິດ ມາດຳເນີນຄະດີ ເພື່ອຮັບປະກັນການປະຕິບັດກົດໝາຍ ຢ່າງຖືກຕ້ອງ ແລະ ຍຸຕິທຳ.

ສຳລັບການດຳເນີນຄະດີກ່ຽວກັບສັດປ່າຂອງ ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ຜູ້ເຂົ້າຮ່ວມອື່ນ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 65 (ໃໝ່) ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້**

ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ຊຶ່ງແມ່ນ ກົມກວດກາປ່າໄມ້ ເປັນເສນາທິການ;
2. ພະແນກກະສິກຳ ແລະ ປ່າໄມ້ຂັ້ນແຂວງ ຊຶ່ງແມ່ນ ກອງກວດກາປ່າໄມ້ປະຈຳ ແຂວງ, ນະຄອນຫຼວງ ເປັນເສນາທິການ;
3. ຫ້ອງການກະສິກຳ ແລະ ປ່າໄມ້ຂັ້ນເມືອງ ຊຶ່ງແມ່ນ ໜ່ວຍງານກວດກາປ່າໄມ້ ເມືອງ, ເທດສະບານ, ນະຄອນ ເປັນເສນາທິການ.

ສິດ ແລະ ໜ້າທີ່ ຂອງອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ແລະ ເຈົ້າໜ້າທີ່ປ່າໄມ້ ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້.

**ມາດຕາ 66 (ໃໝ່) ການດຳເນີນການສືບສວນ-ສອບສວນ**

ໃນການດຳເນີນການສືບສວນ-ສອບສວນ ຄະດີກ່ຽວກັບສັດປ່າ ຕ້ອງປະຕິບັດຕາມຂັ້ນຕອນ, ນຳໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 67 (ໃໝ່) ການຍຶດ ຫຼື ອາຍັດ**

ສັດປ່າ ລວມທັງ ຊາກ, ຊິ້ນສ່ວນ, ຜະລິດຕະພັນ ສັດປ່າ, ເຄື່ອງມື ແລະ ອຸປະກອນ ທີ່ອົງການສືບສວນ-ສອບສວນຂອງ ເຈົ້າໜ້າທີ່ ພາສີ, ຕຳຫຼວດ, ທະຫານ, ຕ້ານການສໍ້ລາດບັງຫຼວງ ແລະ ພາກສ່ວນອື່ນທີ່ ຍຶດ ຫຼື ອາຍັດນັ້ນ ຕ້ອງມອບໃຫ້ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ປ່າໄມ້ ຕາມແຕ່ລະກໍລະນີ ເພື່ອດຳເນີນຄະດີ ຕາມກົດໝາຍ.

ໃນກໍລະນີໄດ້ຮູ້ແຈ້ງກ່ຽວກັບປະເພດ, ຈຳນວນ ແລະ ສະຖານທີ່ເກັບມ້ຽນ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ທີ່ພົວພັນກັບການກະທຳຜິດ ແລະ ຈະນຳໃຊ້ເປັນປະໂຫຍດ ໃນການດຳເນີນຄະດີ ຫົວໜ້າອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ຫຼື ຫົວໜ້າອົງການໄອຍະການປະຊາຊົນ ຫຼື ປະທານສານປະຊາຊົນ ຕ້ອງອອກຄຳສັ່ງຍຶດ ຫຼື ອາຍັດ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ສັດປ່າ ນັ້ນ.

# ພາກທີ VII
# ການຄຸ້ມຄອງ ແລະ ການກວດກາ ວຽກງານສັດປ່າ
## ໝວດທີ 1
## ການຄຸ້ມຄອງວຽກງານສັດປ່າ

**ມາດຕາ 68 (ປັບປຸງ) ອົງການຄຸ້ມຄອງວຽກງານສັດປ່າ**

ລັດຖະບານ ຄຸ້ມຄອງວຽກງານສັດປ່າ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງອື່ນ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານສັດປ່າ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;
4. ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ.

**ມາດຕາ 69 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ໃນການຄຸ້ມຄອງວຽກງານສັດປ່າ ກະຊວງກະສິກຳ ແລະ ປ່າໄມ້ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ກ່ຽວກັບວຽກງານສັດປ່າ ເພື່ອສະເໜີລັດຖະບານພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ເປັນແຜນການ, ແຜນງານ, ໂຄງການກ່ຽວກັບວຽກງານສັດປ່າ;
3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສັດປ່າ;
4. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສັດປ່າ;
5. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສັດປ່າ;
6. ຄຸ້ມຄອງ, ຮັບຮອງ ບັນຊີສັດປ່າ ທຸກປະເພດ ໃນ ສປປ ລາວ;
7. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບສັດປ່າ;
8. ສ້າງ, ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ;
9. ຄົ້ນຄວ້າ ວິທະຍາສາດ ແລະ ເຕັກໂນໂລຊີ ດ້ານການຂະຫຍາຍພັນສັດປ່າ;
10. ສັງລວມ, ເຜີຍແຜ່ ຜົນການຄົ້ນຄວ້າ ດ້ານວິທະຍາສາດ ແລະ ເຕັກໂນໂລຊີ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບສັດປ່າ;
11. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັດປ່າ;
12. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ສຳລັບວຽກງານສັດປ່າ;
13. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ;
14. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານສັດປ່າ;

15. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັດປ່າ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 70 (ປັບປຸງ) ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານສັດປ່າ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັດປ່າ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສັດປ່າ;

3. ສະເໜີ ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສັດປ່າ;

4. ຊີ້ນຳ, ຄຸ້ມຄອງ, ຕິດຕາມ ການຈັດຕັ້ງປະຕິບັດວຽກງານສັດປ່າ;

5. ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ສັດປ່າ;

6. ຄຸ້ມຄອງ ແລະ ນຳໃຊ້ ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ;

7. ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດກ່ຽວກັບສັດປ່າ;

8. ສັງລວມ, ເຜີຍແຜ່ ຜົນການຄົ້ນຄວ້າ ດ້ານວິທະຍາສາດ ແລະ ເຕັກໂນໂລຊີ ແລະ ສະໜອງ ຂໍ້ມູນຂ່າວສານ ກ່ຽວກັບສັດປ່າ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັດປ່າ;

10. ສ້າງ, ບຳລຸງ ແລະ ຍົກລະດັບ ບຸກຄະລາກອນ ສຳລັບວຽກງານສັດປ່າ;

11. ປະສານສົມທົບກັບ ພະແນກການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັດປ່າ;

12. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ ກ່ຽວກັບວຽກງານສັດປ່າ ຕາມການມອບໝາຍຂອງຂັ້ນເທິງ;

13. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັດປ່າ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 71 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານສັດປ່າ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານສັດປ່າ;

2. ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ, ໂຄງການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ກ່ຽວກັບວຽກງານສັດປ່າ;

3. ສະເໜີ ອອກ, ໂຈະ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານສັດປ່າ;

4. ຊີ້ນຳ, ຊຸກຍູ້, ຕິດຕາມ ການປະຕິບັດວຽກງານ ຂອງຈຸງານກະສິກຳ ແລະ ປ່າໄມ້ຂອງ ໜ່ວຍງານເສດຖະກິດ-ການເງິນບ້ານ ເປັນຕົ້ນ ການປົກປັກຮັກສາ ແລະ ພັດທະນາ ສັດປ່າ ຕາມແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ;

5. ຊຸກຍູ້ອົງການປົກຄອງບ້ານ ຈັດຕັ້ງປະຊາຊົນຢູ່ພາຍໃນບ້ານ ເຂົ້າຮ່ວມການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ສັດປ່າ;

6. ນຳໃຊ້ລະບົບຂໍ້ມູນ ຂ່າວສານ ກ່ຽວກັບສັດປ່າ;

7. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານສັດປ່າ;

8. ປະສານສົມທົບ ກັບຫ້ອງການ, ອົງການປົກຄອງບ້ານ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານສັດປ່າ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານສັດປ່າ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 72 (ໃໝ່) ສິດ ແລະ ໜ້າທີ່ ຂອງຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ**

ໃນການຄຸ້ມຄອງວຽກງານສັດປ່າ ຈຸງານກະສິກຳ ແລະ ປ່າໄມ້ ຂອງໜ່ວຍງານເສດຖະກິດ-ການເງິນບ້ານ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສັດປ່າ;

2. ເຜີຍແຜ່ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສັດປ່າ;

3. ຄົ້ນຄວ້າ ແລະ ສະເໜີ ໃຫ້ອົງການປົກຄອງບ້ານ ອອກລະບຽບການນຳໃຊ້ສັດປ່າຂັ້ນບ້ານ ໂດຍສອດຄ່ອງກັບກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ;

4. ປຸກລະດົມປະຊາຊົນພາຍໃນບ້ານ ເຂົ້າຮ່ວມການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ສັດປ່າ;

5. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງກ່ຽວກັບການຕ້ານ ແລະ ສະກັດກັ້ນ ການບຸກລຸກ ແລະ ທຳລາຍ ທີ່ຢູ່ອາໄສ ຫຼື ແຫຼ່ງອາຫານຂອງສັດປ່າ;

6. ລາຍງານສະພາບການບຸກລຸກ ແລະ ທຳລາຍ ທີ່ຢູ່ອາໄສ, ແຫຼ່ງອາຫານຂອງສັດປ່າ ຫຼື ການລະເມີດກົດໝາຍ ກ່ຽວກັບສັດປ່າ ຕໍ່ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ ແລະ ອົງການປົກຄອງບ້ານ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 73 (ໃໝ່) ສິດ ແລະ ໜ້າທີ່ ຂອງຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບອົງການຄຸ້ມຄອງວຽກງານສັດປ່າ ກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ສັດປ່າ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາວຽກງານສັດປ່າ

**ມາດຕາ 74 (ປັບປຸງ) ອົງການກວດກາວຽກງານສັດປ່າ**

ອົງການກວດກາວຽກງານສັດປ່າ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານສັດປ່າ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 68 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 75 (ໃໝ່) ເນື້ອໃນການກວດກາ**

ການກວດກາວຽກງານສັດປ່າ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານສັດປ່າ;
2. ການປະຕິບັດໜ້າທີ່ຂອງ ເຈົ້າໜ້າທີ່ປ່າໄມ້ ແລະ ພະນັກງານ-ລັດຖະກອນທີ່ກ່ຽວຂ້ອງ;
3. ການເຄື່ອນໄຫວວຽກງານ ແລະ ການດຳເນີນທຸລະກິດ ກ່ຽວກັບວຽກງານສັດປ່າ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານສັດປ່າ;
5. ເນື້ອໃນອື່ນທີ່ຈຳເປັນ.

**ມາດຕາ 76 (ປັບປຸງ) ຮູບການການກວດກາ**

ການກວດກາວຽກງານສັດປ່າ ມີ ສາມຮູບການ ດັ່ງນີ້:

1. ການກວດກາ ຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ໃນການດຳເນີນການກວດກາວຽກງານສັດປ່າ ຕ້ອງປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

# ພາກທີ VIII
# ງົບປະມານ ແລະ ອັນສັດປ່າແຫ່ງຊາດ

**ມາດຕາ 77 (ໃໝ່) ງົບປະມານ**

ງົບປະມານທີ່ນຳໃຊ້ເຂົ້າໃນວຽກງານສັດປ່າ ມີ ດັ່ງນີ້:

1. ງົບປະມານຂອງລັດ;
2. ກອງທຶນປົກປັກຮັກສາປ່າໄມ້;

3. ການຊ່ວຍເຫຼືອ ແລະ ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;

4. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ສໍາລັບການຄຸ້ມຄອງ ແລະ ການນໍາໃຊ້ງົບປະມານ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 78 (ປັບປຸງ) ວັນສັດປ່າແຫ່ງຊາດ**

ລັດ ກໍານົດເອົາ ວັນທີ 3 ມີນາ ຂອງທຸກປີ ເປັນວັນສັດປ່າແຫ່ງຊາດ ເພື່ອຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ສັດປ່າ ໃຫ້ອຸດົມສົມບູນ ແລະ ມີຄວາມຍືນຍົງ.

## ພາກທີ IX
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 79 (ປັບປຸງ) ນະໂຍບາຍ ຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງໃນການ ປົກປັກຮັກສາ, ພັດທະນາສັດປ່າ, ຕ້ານ, ສະກັດກັ້ນ, ປ້ອງກັນ ການບຸກລຸກ, ການທໍາລາຍ ຖິ່ນທີ່ຢູ່ອາໄສ, ແຫຼ່ງອາຫານ ແລະ ເຂດອະນຸລັກພັນສັດປ່າ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

ສໍາລັບຜູ້ໃຫ້ຂໍ້ມູນ ກ່ຽວກັບການລະເມີດກົດໝາຍສະບັບນີ້ ຈະໄດ້ຮັບນະໂຍບາຍ ຕາມລະບຽບການ.

**ມາດຕາ 80 (ປັບປຸງ) ມາດຕະການ ຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 81 (ປັບປຸງ) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທໍາຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍບໍ່ຫຼວງຫຼາຍ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າຄວາມເສຍຫາຍຂອງສັດປ່າ.

ໃນກໍລະນີມີການລະເມີດເປັນຄັ້ງທີ ສອງ ຫຼື ສາມ ຈະຖືກປັບໃໝ ສີ່ເທົ່າ ຂອງມູນຄ່າຄວາມເສຍຫາຍຂອງສັດປ່າບັນຊີ II ແລະ ສາມເທົ່າ ຂອງມູນຄ່າຄວາມເສຍຫາຍ ຂອງສັດປ່າບັນຊີ III ພ້ອມທັງຍຶດ ຫຼື ອາຍັດຊັບສິນທີ່ໄດ້ມາ ໂດຍບໍ່ຖືກຕ້ອງນັ້ນ ເປັນຂອງລັດ.

ສໍາລັບອັດຕາການປັບໃໝ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 82 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 83 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 2 ຕຸລາ 2023 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງ ລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນ ກົດໝາຍວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ